13TH HIGH-LEVEL ROUND TABLE MEETING

Vientiane | 17 November 2021

# ຜົນການຄົ້ນຄວ້າຈາກການປຶກສາຫາລືຫຼາຍຝ່າຍຜົນກະທົບ ຈາກການລະບາດພະຍາດໂຄວິດ-19 ເພື່ອກະກຽມແຜນການ ຟື້ນຟູຈາກການລະບາດພະຍາດໂຄວິດ-19

ພະນະທ່ານ ປອ ມະໂນທອງ ວົງໄຊ
ຮອງລັດຖະມົນຕີ
ກະຊວງແຜນການ ແລະ ການລົງທຶນ

# ສາລະບານ

**01** ເອກະສານກ່ຽວກັບຄວາມເປັນມາ 5 ຫົວຂໍ້

**02** ທິດທາງຕໍ່ໜ້າ (ແຜນສຳລັບການພັດທະນາແຜນວຽກການຟື້ນຟູ ຈາກການລະບາດຂອງພະຍາດ COVID-19)

## 01

## ເອກະສານກ່ຽວກັບຄວາມເປັນມາ 5 ຫົວຂໍ້

# ເອກະສານກ່ຽວກັບຄວາມເປັນມາ 5 ຫົວຂໍ້ ທີ່ເນັ້ນໜັກກ່ຽວກັບຜົນກະທົບ, ຄຳແນະນຳ ແລະ ຂໍ້ມູນທີ່ກ່ຽວຂ້ອງທີ່ສຳຄັນ

**01** ການສະໜອງທຶນ ສຳລັບການພັດທະນາແບບຍືນຍົງ ແລະ ການຮ່ວມມືເພື່ອການພັດທະນາທີ່ມີປະສິດທິຜົນ

**02** ການຄ້າ ແລະ ພາກເອກະຊົນ, ຕ່ອງໂສ້ມູນຄ່າ, ແລະ ການທ່ອງທ່ຽວ

**03** ການບໍລິຫານຄວາມປ່ຽນແປງ ແລະ ການເພີ່ມທະວີການກະກຽມດ້ານນະໂຍບາຍ ສຳລັບວຽກເຮັດງານທຳທີ່ມີຄຸນຄ່າ

**04** ທຶນທາງດ້ານຊັບພະຍາກອນມະນຸດ

**05** ການເຕີບໂຕສີຂຽວ, ຄວາມທົນທານ, ແລະ ການຄຸ້ມຄອງຄວາມສ່ຽງ

## 02

# ທິດທາງຕໍ່ໜ້າ (ແຜນສຳລັບການພັດທະນາແຜນວຽກການຟື້ນຟູຈາກການລະບາດຂອງພະຍາດ COVID-19)

# ການພັດທະນາແຜນວຽກການຟື້ນຟູຈາກການລະບາດຂອງພະຍາດ COVID-19

## ເຫດການສຳຄັນຈາກປະຈຸບັນຮອດປີ 2022

| ລຳ ດັບ | ກິດຈະກຳ | ເວລາ |
|---|---|---|
| 1 | ກອງປະຊຸມປຶກສາຫາລືລະດັບຊາດ ຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບຄຳແນະນຳທີ່ສຳຄັນຈາກເອກະສານຄວາມເປັນມາ 5 ສະບັບ | ກາງເດືອນທັນວາ 2021 |
| 2 | ສຳເລັດຮ່າງທຳອິດຂອງແຜນວຽກການຟື້ນຟູຈາກການລະບາດຂອງພະຍາດ COVID-19 | ທ້າຍເດືອນມີນາ 2022 |
| 3 | ກອງປະຊຸມປຶກສາຫາລືລະດັບຊາດ ກ່ຽວກັບແຜນວຽກການຟື້ນຟູຈາກການລະບາດຂອງພະຍາດ COVID-19 | ເດືອນເມສາ 2022 |
| 4 | ກອງປະຊຸມກວດສອບຄວາມຖືກຕ້ອງ ຮ່ວມກັບຄູ່ຮ່ວມພັດທະນາທັງໝົດ | ກາງເດືອນເມສາ 2022 |
| 5 | ສຳເລັດການສ້າງແຜນວຽກການຟື້ນຟູລະດັບຊາດຈາກການລະບາດຂອງພະຍາດ COVID-19 | ທ້າຍເດືອນເມສາ 2022 |
| 6 | ບົດລາຍງານປະຈຳປີ ກ່ຽວກັບການຈັດຕັ້ງປະຕິບັດແຜນວຽກການຟື້ນຟູລະດັບຊາດ ຈາກການລະບາດຂອງພະຍາດ COVID-19 ໂດຍຜ່ານການເຜີຍແຜ່ບົດລາຍງານປະຈຳປີ NSEDP (2022) ໃນລະຫວ່າງ 2022 RTIM | ທ້າຍເດືອນພະຈິກ 2022 |

# ຂອບວຽກການຟື້ນຟູລະດັບຊາດຈາກການລະບາດຂອງພະຍາດ COVID-19 2021-2025



# 01

# ການສະໜອງທຶນ ສຳລັບການພັດທະນາແບບຍືນຍົງ ແລະ ການຮ່ວມມືເພື່ອການພັດທະນາທີ່ມີປະສິດທິຜົນ (ຂອບວຽກການເງິນມະຫາພາກ)

# ຄຳແນະນຳ (1/2)

| ລຳດັບ | ຄຳແນະນຳ / ກິດຈະກຳ | ໄລຍະເວລາ | ໜ່ວຍງານຈັດຕັ້ງປະຕິບັດ |
|---|---|---|---|
| 1 | **ການຄຸ້ມຄອງໜີ້ສິນ ແລະ ຄວາມໂປ່ງໃສ:** (1) ຈຳກັດ/ຢຸດການກູ້ຢືມທີ່ບໍ່ແມ່ນໃນຮູບແບບການສຳປະທານ, (2) ປັບໂຄງສ້າງໜີ້ສິນ, (3) ເລັ່ງການປັບໂຄງສ້າງ ແລະ ການປະຕິຮູບວິສາຫະກິດຂອງລັດ (SOEs) ໃຫ້ດຳເນີນແບບເອກະຊົນ ແລະ ສ້າງ ແລະ (4) ຈັດຕັ້ງປະຕິບັດຍຸດທະສາດການຄຸ້ມຄອງໜີ້ສິນ, (5) ຮັບປະກັນການຈັດຫາທຶນຈາກໜີ້ສິນໃຫ້ມີຄວາມຍືນຍົງ ໂດຍຜ່ານຕະຫຼາດພັນທະບັດທີ່ເປັນສະກຸນເງິນທ້ອງຖິ່ນ (LCY). | 2021-2025 | MOF: EFCD, SOE Dept, MPI: DOP |
| 2 | **ການຄຸ້ມຄອງໜີ້ສິນ ແລະ ຄວາມໂປ່ງໃສ:** (1) ສ້າງຂອບວຽກດ້ານນິຕິກຳທີ່ຈະແຈ້ງສຳລັບການໃຫ້ກູ້ຢືມເງິນທີ່ຢືມມາຈາກພາກສ່ວນອື່ນ, ການຄ້ຳປະກັນຂອງພາກລັດ ແລະ ໜີ້ສິນທີ່ອາດຈະເກີດຂຶ້ນ, (2) ປະເມີນການໃຫ້ກູ້ຢືມເງິນຢ່າງລະມັດລະວັງ ແລະ ການຄ້ຳປະກັນ ຕໍ່ກັບໂຄງການລົງທຶນຂອງ SOE, (3) ລົງເລິກຕະຫຼາດທຶນພາຍໃນ. | 2022-2025 | FPLD, EFCD, BOL |
| 3 | **ຄວາມຍືນຍົງດ້ານການເງິນ:** (1) ປັບປຸງການຕິດຕາມ ແລະ ການຄຸ້ມຄອງຜູ້ຈ່າຍພາສີລາຍໃຫຍ່ ພ້ອມທັງຂະຫຍາຍຂອບເຂດຢ່າງກວ້າງຂວາງ, (2) ເພີ່ມທະວີການກວດສອບ ແລະ ການບັງຄັບໃຊ້, (3) ປະຕິບັດການສຶກສາລາຍຈ່າຍດ້ານພາສີ ແລະ ປະເມີນໂຄງການພື້ນຖານໂຄງລ່າງຂອງລັດຢ່າງລະມັດລະວັງ. | 2021-2025 | EFCD, DOP, MoF, TD, BD, FPLD, MPI |

# ຄຳແນະນຳ (2/2)

| ລຳດັບ | ຄຳແນະນຳ / ກິດຈະກຳ | ໄລຍະເວລາ | ໜ່ວຍງານຈັດຕັ້ງປະຕິບັດ |
|---|---|---|---|
| 4 | **ຄວາມຍືນຍົງດ້ານການເງິນ:** (1) ປັບປຸງ ແລະ ຈຳກັດສິ່ງຈູງໃຈດ້ານການເງິນ ແລະ ການສຳປະທານສຳລັບໂຄງການລົງທຶນຂະໜາດໃຫຍ່, (2) ພັດທະນາຄວາມອາດສາມາດໃນການຄາດຄະເນລາຍຮັບຢ່າງມີປະສິດທິຜົນ, (3) ບັງຄັບໃຊ້ກົດໝາຍການຈັດຊື້-ຈັດຈ້າງ (4) ສ້າງຄວາມສອດຄ່ອງລະຫວ່າງລາຍຈ່າຍກັບຊັບພະຍາກອນທີ່ມີຢູ່. | 2022-2025 | MoF, FPLD, DOP, PMO |
| 5 | **ສະຖຽນລະພາບຂະແໜງການເງິນ:** (1) ເພີ່ມສະພາບຄ່ອງ FOREX ແລະ ຮັກສາທຶນສຳຮອງ, (2) ເພີ່ມການຕິດຕາມຜົນການດຳເນີນງານຂອງທະນາຄານຕ່າງໆ, (3) ຜ່ອນຄາຍນະໂຍບາຍການເລື່ອນຊຳລະເງິນກູ້ຢ່າງລະມັດລະວັງ. | 2022-2025 | MOIC, MPI, BOL MOF, BSD, ທຸກກະຊວງທີ່ກ່ຽວຂ້ອງ |
| 6 | **ສະຖຽນລະພາບຂະແໜງການເງິນ:** (1) ຮັບຮອງການຕິດຕາມຊຸກຍູ້ບົນພື້ນຖານຄວາມສ່ຽງ, ຖ່າຍໂອນສູ່ຂອບວຽກດ້ານທຶນ Basel II, (2) ສ້າງລະບົບເຕືອນໄພລ່ວງໜ້າສຳລັບການຕິດຕາມຊຸກຍູ້ການທະນາຄານ, (3) ສ້າງຄວາມເຂັ້ມແຂງໃຫ້ແກ່ຄວາມອາດສາມາດທາງດ້ານການດຳເນີນງານ ແລະ ດ້ານການເງິນ ໃນໂຄງການຮັບປະກັນເງິນຝາກ, (4) ສ້າງຂອບວຽກຄຸ້ມຄອງຄວາມສ່ຽງ. | 2022-2025 | BSD, DPO |

# 02

# ການຄ້າ ແລະ ພາກເອກະຊົນ, ຕ່ອງໂສ້ມູນຄ່າ, ແລະ ການທ່ອງທ່ຽວ

# ຄຳແນະນຳ (1/2)

| ລຳດັບ | ຄຳແນະນຳ / ກິດຈະກຳ | ໄລຍະເວລາ | ໜ່ວຍງານຈັດຕັ້ງປະຕິບັດ |
|---|---|---|---|
| 1 | **ປັບປຸງສະພາບແວດລ້ອມຂອງການລົງທຶນ ແລະ ການດຳເນີນທຸລະກິດ** ລວມທັງການເພີ່ມທະວີການເຈລະຈາ ແລະ ການຮ່ວມມືລະຫວ່າງພາກລັດ - ເອກະຊົນ ແລະ ເພີ່ມທະວີການປະສານງານລະຫວ່າງສະຖາບັນ ເພື່ອປັບປຸງການອະນຸມັດການລົງທຶນ ແລະ ໃບອະນຸຍາດດຳເນີນທຸລະກິດ. | 2021-2023 | MPI, MoF, MoIC, ກະຊວງທີ່ກ່ຽວຂ້ອງອື່ນໆ, ສະພາການຄ້າ |
| 2 | ຊຸກຍູ້**ການເຊື່ອມໂຍງທາງດ້ານເສດຖະກິດກັບພາກພື້ນ** ແລະ ດ້ານອື່ນໆທີ່ກ່ຽວຂ້ອງ ເຊັ່ນ: ການປັບປຸງການເຊື່ອມຈອດພື້ນຖານໂຄງລ່າງ ແລະ ການຄວບຄຸມດ້ານຊາຍແດນ, ການປັບປຸງຂອບວຽກດ້ານລະບຽບການ, ແລະ ການຈັດຕັ້ງປະຕິບັດບັນດາມາດຕະການອຳນວຍຄວາມສະດວກໃນທາງການຄ້າ. | 2021-2025 | MoFA, MoF, MoIC, MPWT ກະຊວງທີ່ກ່ຽວຂ້ອງອື່ນໆ |
| 3 | ສະໜອງ**ການຊ່ວຍເຫຼືອທາງດ້ານເສດຖະກິດ ເພື່ອຟື້ນຟູຂະແໜງການທ່ອງທ່ຽວ** ໂດຍສຸມໃສ່ເພີ່ມການມີສ່ວນຮ່ວມຢ່າງມີລະບົບລະຫວ່າງລັດຖະບານ ແລະ ພາກເອກະຊົນ, ມີນະໂຍບາຍສະໜັບສະໜູນການທ່ອງທ່ຽວ ແລະ ເຮັດໃຫ້ທຸລະກິດມີສະພາບຄ່ອງ ແລະ ຈັດຕັ້ງປະຕິບັດບັນດາຂໍ້ກຳນົດດ້ານສາທາລະນະສຸກ ແລະ ຍຸດທະສາດການສື່ສານທີ່ດີ. | 2021-2025 | MICT, MoLSW, MoES, BoL, MoH, ສະພາການຄ້າ |

# ຄຳແນະນຳ (2/2)

| ລຳດັບ | ຄຳແນະນຳ / ກິດຈະກຳ | ໄລຍະເວລາ | ໜ່ວຍງານຈັດຕັ້ງປະຕິບັດ |
|---|---|---|---|
| 4 | ສະໜັບສະໜູນ**ຊາວກະສິກອນຂະໜາດນ້ອຍ** ໃນສະພາບການລະບາດຂອງ COVID-19 ໂດຍສຸມໃສ່ການຍົກລະດັບຄວາມຮັບຮູ້ກ່ຽວກັບຄວາມສ່ຽງ, ການສ້າງຄວາມອາດສາມາດຂອງຊາວກະສິກອນໃນທ້ອງຖິ່ນ ເພື່ອຟື້ນຟູການຜະລິດກະສິກຳ ແລະ ການອຳນວຍຄວາມສະດວກໃຫ້ແກ່ການປ່ຽນແປງໄປສູ່ລະບົບການຜະລິດອາຫານທີ່ຍືນຍົງ ແລະ ທົນທານ. | 2021-2025 | MAF, ອຳນາດການປົກຄອງຂັ້ນແຂວງ |
| 5 | ສ້າງ**ຂອບວຽກນະໂຍບາຍດ້ານການຄ້າຜ່ານທາງລະບົບອີເລັກໂທຣນິກ (ອີ-ຄອມເມີສ)** ທີ່ດີ ໂດຍຜ່ານການດຳເນີນ**ການປະເມີນຄຸນວຸດທິດ້ານດິຈິຕອນ**ຢ່າງລະມັດລະວັງ ແລະ ຍຸດທະສາດດິຈິຕອນແຫ່ງຊາດ ໂດຍສຸມໃສ່ພື້ນຖານໂຄງລ່າງ ແລະ ການບໍລິການດ້ານ ICT, ການອຳນວຍຄວາມສະດວກໃຫ້ແກ່ການຄ້າ, ການຂົນສົ່ງ, ວິທີການຊຳລະເງິນ ແລະ ອື່ນໆ. | 2021-2025 | MoTC, MoIC, BoL |
| 6 | ສະໜອງ**ລະບົບສະໜັບສະໜູນພິເສດ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ** ໂດຍສະເພາະຜູ້ທີ່ໄດ້ຮັບຜົນກະທົບຈາກ COVID-19 ເນື່ອງຈາກການສູນເສຍວຽກ ຫຼື ຜົນກະທົບອື່ນໆ ໂດຍການສ້າງໂຄງການການຈ້າງງານ ແລະ ການສະໜອງໂອກາດໃນການສ້າງທຸລະກິດໃໝ່. ຕົວຢ່າງ ອີ-ຄອມເມີສ. | 2021-2025 | MoIC, MoLSW, ກະຊວງອື່ນໆທີ່ກ່ຽວຂ້ອງ ແລະ ສະພາການຄ້າ |

03

# ການບໍລິຫານປ່ຽນແປງ ແລະ ການເພີ່ມທະວີການກະກຽມດ້ານນະໂຍບາຍ ສໍາລັບວຽກເຮັດງານທໍາທີ່ມີຄຸນຄ່າ

# ຄຳແນະນຳ (1/2)

| ລຳດັບ | ຄຳແນະນຳ / ກິດຈະກຳ | ໄລຍະເວລາ | ໜ່ວຍງານຈັດຕັ້ງປະຕິບັດ |
|---|---|---|---|
| 1 | ສ້າງຄວາມເຂັ້ມແຂງໃຫ້ແກ່ການຈັດ**ກອງປະຊຸມສົນທະນາທາງສັງຄົມ ກ່ຽວກັບການເປີດທຸລະກິດຄືນໃໝ່**, ການສ້າງ ແລະ ການບັງໃຊ້ນະໂຍບາຍແຫ່ງຊາດ ແລະ **ນິຕິກຳກ່ຽວກັບຄ່າແຮງງານ, ການບໍລິຫານຄຸ້ມຄອງແຮງງານ ແລະ ການເຄື່ອນຍ້າຍຂອງແຮງງານ, ການຄຸ້ມຄອງຊາຍແດນ**, ໂດຍສອດຄ່ອງກັບມາດຕະຖານແຮງງານ ແລະ ການປະຕິບັດຂອງສາກົນ. | 2021-2025 | MoLSW, LNCCI, LFTU, LWU |
| 2 | ສ້າງຄວາມເຂັ້ມແຂງ ແລະ ຂະຫຍາຍ**ລະບົບການປົກປ້ອງທາງສັງຄົມ**ທີ່ສາມາດຕອບໂຕ້ສະພາບການປ່ຽນແປງໂດຍໄວ, ສືບຕໍ່**ໃຫ້ບໍລິການກຸ່ມຄົນ**ທີ່ມີຄວາມບອບບາງ ແລະ ກຸ່ມຄົນທີ່ມີຄວາມສ່ຽງ. | 2021-2025 | MPI, MoLW, MoF, MoH, MoAF, MoES, MoHA, LNCCI, LFTU, LWU, MoPS, OSPP |
| 3 | ສົ່ງເສີມ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ການຮ່ວມມືລະຫວ່າງພາກລັດ-ພາກເອກະຊົນ ກ່ຽວກັບ**ທັກສະດ້ານດິຈິຕອນ, ການທວນຄືນທັກສະ ແລະ ການຍົກລະດັບທັກສະ, ການໃຫ້ບໍລິການການຈັດຫາງານ** ແລະ ລະບົບຂໍ້ມູນຕະຫຼາດແຮງງານ ສຳລັບການການຈ້າງງານ. | 2021-2025 | MoLSW, MoES, LYU, LWU, LNCCI, LFTU, TVET, ສະຖາບັນພັດທະນາທັກສະ |

# ຄຳແນະນຳ (2/2)

| ລຳດັບ | ຄຳແນະນຳ / ກິດຈະກຳ | ໄລຍະເວລາ | ໜ່ວຍງານຈັດຕັ້ງປະຕິບັດ |
|---|---|---|---|
| 4 | ສ້າງຄວາມເຂັ້ມແຂງໃຫ້ແກ່ການຈັດຕັ້ງປະຕິບັດຍຸດທະສາດການສົ່ງເສີມການຈ້າງງານໃນຊົນນະບົດ ເພື່ອ**ຄວາມໝັ້ນຄົງທາງດ້ານສະບຽງອາຫານ** ແລະ ການສ້າງລາຍຮັບ ທີ່ອຳນວຍຄວາມສະດວກໃຫ້ແກ່ການເພີ່ມການເຂົ້າເຖິງ**ການຈ້າງງານໃນລະບົບ ແລະ ວຽກເຮັດງານທີ່ເປັນທຳທີ່ມີຄຸນຄ່າ** ແລະ **ຄວາມທົນທານຕໍ່ການປ່ຽນແປງຂອງສະພາບດິນຟ້າອາກາດ.** | 2021-2025 | MPI, MoLW, MoIC, MoAF, LNCCI, LFTU, LWU |
| 5 | ສ້າງຄວາມເຂັ້ມແຂງໃຫ້ແກ່ການເຊື່ອມໂຍງນະໂຍບາຍ ແລະ ລະບຽບການດ້ານການລົງທຶນ, ການຄ້າ ແລະ ອຸດສາຫະກຳ ກັບນະໂຍບາຍດ້ານແຮງງານ ແລະ ການຈ້າງງານ ເພື່ອສ້າງຜົນກະທົບຂອງການລົງທຶນໄປສູ່**ການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງໃນທ້ອງຖິ່ນ, ການຈ້າງງານ, ການເຄື່ອນຍ້າຍແຮງງານ** ແລະ **ການນຳໃຊ້ຊັບພະຍາກອນ.** | 2021-2025 | MPI, MoLW, MoIC, MoAF, LNCCI, LFTU, LWU, MoPS |
| 6 | ມີຄວາມພະຍາຍາມໃນການຕອບໂຕ້ ແລະ ຟື້ນຟູ ໂດຍການຕິດຕາມຜົນກະທົບຂອງ COVID-19 ຕໍ່ກັບການເດີນທາງ ແລະ ປະຊາຊົນທີ່ກຳລັງເດີນທາງ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ຂະບວນ**ການຕັດສິນໃຈໂດຍອີງໃສ່ຫຼັກຖານ** ໂດຍຜ່ານ**ຂໍ້ມູນທີ່ມີຢູ່.** | 2021-2025 | MoLSW, MPI, MOPS MOF, BOL, MoIC, LNCCI, LFTU |

# 04

# ທຶນທາງດ້ານຊັບພະຍາກອນມະນຸດ

# ຄຳແນະນຳ : ໄລຍະສັ້ນ

| ລຳດັບ | ຄຳແນະນຳ / ກິດຈະກຳ | ໄລຍະເວລາ | ໜ່ວຍງານຈັດຕັ້ງປະຕິບັດ |
|---|---|---|---|
| 1 | **ການສຶກສາ**: (1) ເປີດໂຮງຮຽນຄືນຢ່າງມີຄວາມປອດໄພ ແລະ ຫຼຸດຜ່ອນການສູນເສຍການຮຽນ, (2) ຮັກສາງົບປະມານດ້ານການສຶກສາ, (3) ແກ້ໄຂບັນຫາການສູນເສຍການຮຽນ ແລະ ສະໜັບສະໜູນກຸ່ມຄົນທີ່ມີຄວາມບອບບາງ ເພື່ອແກ້ໄຂອັດຕາການເຂົ້າຮຽນທີ່ຕ່ຳ ແລະ ການອອກໂຮງຮຽນທີ່ສູງຂຶ້ນ, (4) ສືບຕໍ່ພັດທະນາຫຼັກສູດປະຖົມແຫ່ງຊາດ ແລະ ສື່ການຮຽນ-ການສອນໃໝ່, (5) ເສີມຂະຫຍາຍທັກສະດິຈິຕອນ, ການຮູ້ໜັງສື ແລະ ທັກສະໃນສັດຕະວັດທີ 21 ໃນການສຶກສາຂັ້ນພື້ນຖານ, ອາຊີວະສຶກສາ, ແລະ ຊັ້ນສູງ, ( 6) ວາງແຜນຄວາມພ້ອມດ້ານຄູ-ອາຈານ ແລະ ການເຂົ້າເຖິງຄູ-ອາຈານ ໂດຍອີງໃສ່ຄວາມຕ້ອງການ ແລະ ຕາມການຄາດຄະເນປະຊາກອນ. | 2021-2025 | MoES, NUoL, ສະຖາບັນ TVET |
| 2 | **ສຸຂະພາບ ແລະ ໂພຊະນາການ**: (1) ສ້າງຄວາມເຂັ້ມແຂງຂອງລະບົບສາທາລະນະສຸກເພື່ອຮັບມືກັບການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ສຳລັບອະນາຄົດ, ລວມທັງດ້ານສຸຂະພາບຈິດ ແລະ ການສະໜັບສະໜູນທາງດ້ານຈິດຕະສັງຄົມ, (2) ສ້າງຄວາມເຂັ້ມແຂງໃຫ້ແກ່ການບໍລິການຮັກສາສຸຂະພາບຂັ້ນພື້ນຖານ, (3) ຈັດບູລິມະສິດໃຫ້ແກ່ການໃຫ້ບໍລິການສຸຂະພາບທີ່ສຳຄັນ ໂດຍສະເພາະ RMNCAH, (4) ສ້າງຄວາມເຂັ້ມແຂງໃຫ້ແກ່ຄວາມອາດສາມາດສຳລັບການປິ່ນປົວອາການຂາດໂພຊະນາການກະທັນຫັນ (5) ຂະຫຍາຍການຕິດຕາມຜະລິດຕະພັນທົດແທນນ້ຳນົມແມ່ (BMS) ໃນຮ້ານຂາຍເຄື່ອງຍ່ອຍ, (6) ຂະຫຍາຍວິທີການດູແລ ແລະ ຮັກສາສຸຂະພາບທາງໄກ ໂດຍຜ່ານເຄື່ອງມືສື່ສານ. | 2021-2025 | MoH, DHHP (CN), DHR, FDD, MoLSW, MoES, NUoL, LYU, LWU |
| 3 | **ຄວາມເທົ່າທຽມລະຫວ່າງຍິງ-ຊາຍ**: (1) ລົງທຶນໃສ່ແຮງງານທີ່ເປັນເພດຍິງ ເພື່ອຄວາມເທົ່າທຽມ, ແຜນສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ແຜນ EVAW plans ແລະ SRH/FP, (2) ຫຼຸດຜ່ອນຄວາມຫຼຸດໂຕນກັນໃນຂະແໜງການຕ່າງໆ ທີ່ແມ່ຍິງ ແລະ ເດັກນ້ອຍຖືກປະລະ, (3) ປັບປຸງການເຂົ້າເຖິງປະກັນສັງຄົມ, ການຮັກສາສຸຂະພາບເດັກ, ການລາພັກເກີດລູກ, (4) ນຳໃຊ້ຂໍ້ມູນທີ່ມີການແຍກເປັນເພດຢ່າງສະໝ່ຳສະເໝີ. | 2021-2025 | MPI, MoH, MoES, MoLSW, LWU, MoICT, ພາກເອກະຊົນ |

# ຄຳແນະນຳ : ໄລຍະກາງ

| ລຳ ດັບ | ຄຳແນະນຳ / ກິດຈະກຳ | ໄລຍະເວລາ | ໜ່ວຍງານຈັດຕັ້ງ ປະຕິບັດ |
|---|---|---|---|
| 4 | **ການສຶກສາ:** (1) ເພີ່ມທະວີການພັດທະນາເດັກກ່ອນໄວຮຽນ, ຄວາມກຽມພ້ອມສຳລັບການເຂົ້າໂຮງຮຽນ, ການຫຼຸດຜ່ອນອັດຕາການອອກໂຮງຮຽນ, ແລະ ການຮັບປະກັນຄຸນນະພາບ ແລະ ປະສິດທິພາບຂອງການສຶກສາ, (2) ລົງທຶນໃສ່ການພັດທະນາຄວາມເປັນມືອາຊີບຂອງຄູ-ອາຈານຢ່າງຕໍ່ເນື່ອງ ແລະ ຍືນຍົງ, (3) ແກ້ໄຂຄຸນນະພາບຂອງອິນເຕີເນັດ ແລະ ຄ່າບໍລິການອິນເທີເນັດທີ່ສູງ. | 2023-2025 | MoES, NUoL |
| 5 | **ສຸຂະພາບ & ໂພຊະນາການ**: (1) ຮັບປະກັນລະບົບຕ່ອງໂສ້ການສະໜອງທີ່ບໍ່ຕິດຂັດ ເພື່ອຮັກສາການບໍລິການສຸຂະພາບທີ່ຈຳເປັນ (EHS) ລວມທັງການບໍລິການດ້ານໂພຊະນາການ ແລະ ການວາງແຜນຄອບຄົວ, (2) ສ້າງຄວາມອາດສາມາດຂອງພະນັກງານສາທາລະນະສຸກ ເພື່ອຕອບສະໜອງຕໍ່ເຫດການສຸກເສີນດ້ານສາທາລະນະສຸກໃຫ້ໄດ້ຢ່າງມີປະສິດທິພາບ ພ້ອມດຽວກັນກໍຮັກສາ ແລະ ປັບປຸງຄຸນນະພາບຂອງການບໍລິການສຸຂະພາບທີ່ຈຳເປັນໂດຍສະເພາະໃນການບໍລິການຮັກສາສຸຂະພາບຂັ້ນພື້ນຖານ, (3) ເສີມສ້າງລະບົບການເງິນສຸຂະພາບແບບຍືນຍົງ, ໃນຂະນະທີ່ຮັບປະກັນການເຂົ້າເຖິງການດູແລສຸຂະພາບ ແລະ ການປົກປ້ອງທາງດ້ານການເງິນທີ່ເທົ່າທຽມກັນ, (4) ສ້າງກຸ່ມຜູ້ໃຫ້ຄຳປຶກສາກ່ຽວກັບການລ້ຽງລູກດ້ວຍນົມແມ່ ແລະ ສ້າງໃຫ້ມີການບໍລິການໃຫ້ຄຳປຶກສາດ້ານການລ້ຽງລູກດ້ວຍນົມແມ່ /ການລ້ຽງເດັກແດງ ຜ່ານທາງລະບົບອອນລາຍ. | 2022-2025 | MoH, NC (DHHP), FDD |

# 05

# ການເຕີບໂຕສີຂຽວ, ຄວາມທົນທານ, ແລະ ການຄຸ້ມຄອງຄວາມສ່ຽງ

# ຄຳແນະນຳ (1/2)

| ລຳດັບ | ຄຳແນະນຳ / ກິດຈະກຳ | ໄລຍະເວລາ | ໜ່ວຍງານຈັດຕັ້ງປະຕິບັດ |
|---|---|---|---|
| 1 | **ການເຕີບໂຕສີຂຽວ:** ຕັ້ງເປົ້າໃຫ້ຂະແໜງການເສດຖະກິດມີການປ່ອຍກາກບອນຕໍ່າ; ເລັ່ງການປ່ຽນແປງໄປສູ່ພະລັງງານທີ່ສະອາດ; ສົ່ງເສີມພັນທະບັດສີຂຽວສຳລັບພະລັງງານທົດແທນ; ສົ່ງເສີມງົບປະມານສີຂຽວ ແລະ ການຕິດຕາມລາຍຈ່າຍ; ສົ່ງເສີມການຄຸ້ມຄອງສິ່ງເສດເຫຼືອໃຫ້ມີຄວາມຍືນຍົງ; ຊຸກຍູ້ພື້ນຖານໂຄງລ່າງສີຂຽວ ແລະ ການປ່ຽນແປງຂອງອຸດສາຫະກຳ; ສຳຫຼວດແຫຼ່ງທຶນສີຂຽວສຳລັບ MSMEs. | 2021-2025 | MOIC, MOF, MONRE, MAF, MPWT, LNCCI |
| 2 | **ການສ້າງຄວາມທົນທານ:** ລົງທຶນໃສ່ຊຸມຊົນໃນທ້ອງຖິ່ນ ເພື່ອປົກປັກຮັກສາລະບົບນິເວດ, ຊີວະນາໆພັນ ແລະ ສັດປ່າ; ສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ແລະ ສ້າງຄວາມທົນທານໃຫ້ຊຸມຊົນ ຕໍ່ກັບຄວາມສ່ຽງຈາກໄພພິບັດ ແລະ ການປ່ຽນແປງຂອງສະພາບດິນຟ້າອາກາດ; ສ້າງຄວາມເຂັ້ມແຂງໃຫ້ແກ່ພາກເອກະຊົນໃຫ້ມີຄວາມທົນທານ; ລົງທຶນໃສ່ພື້ນຖານໂຄງລ່າງ ແລະ ຕ່ອງໂສ້ການສະໜອງໃຫ້ມີຄວາມທົນທານ; ສົ່ງເສີມກະສິກຳໃຫ້ມີຄວາມທົນທານຕໍ່ສະພາບດິນຟ້າອາກາດ ແລະ ມີຄວາມຍືນຍົງ ແລະ ການແກ້ໄຂບັນຫາໂດຍອີງໃສ່ທຳມະຊາດ. | 2021-2025 | MONRE, MAF, MAF, MOIC, MLSW, MPWT |

# ຄຳແນະນຳ (2/2)

| ລຳດັບ | ຄຳແນະນຳ / ກິດຈະກຳ | ໄລຍະເວລາ | ໜ່ວຍງານຈັດຕັ້ງປະຕິບັດ |
| --- | --- | --- | --- |
| 3 | **ການຄຸ້ມຄອງຄວາມສ່ຽງ:** ສົ່ງເສີມການສະໜອງທຶນສຳລັບການຄຸ້ມຄອງຄວາມສ່ຽງຈາກໄພພິບັດ; ເຂົ້າເຖິງແຫຼ່ງທຶນສຳລັບແກ້ໄຂບັນຫາການປ່ຽນແປງຂອງສະພາບດິນຟ້າອາກາດ; ສ້າງຄວາມເຂັ້ມແຂງ ແລະ ເຊື່ອມສານວຽກງານ DRR ແລະ ຄວາມທົນທານຕໍ່ການປ່ຽນແປງຂອງສະພາບດິນຟ້າອາກາດ ໃນທົ່ວກະຊວງ ແລະ ຂະແໜງການ; ນຳໃຊ້ຂໍ້ມູນເພື່ອກຳນົດຄວາມສ່ຽງໃຫ້ໄດ້ດີຍິ່ງຂຶ້ນ; ຈັດຕັ້ງປະຕິບັດມາດຕະການຕ່າງໆ ເພື່ອຫຼຸດຜ່ອນມົນລະພິດທາງອາກາດ ແລະ ປັບປຸງຄຸນນະພາບຂອງອາກາດ; ສະໜັບສະໜູນນະໂຍບາຍ DRR ແຫ່ງຊາດໃໝ່ ແລະ ສ້າງຄວາມອາດສາມາດສຳລັບການປົກປ້ອງທາງສັງຄົມໃນການຕອບໂຕ້ກັບໄພພິບັດ ແລະ ດ້ານກະສິກຳ; ປັບປຸງການຄຸ້ມຄອງຄວາມສ່ຽງດ້ານງົບປະມານ. | 2021-2025 | MLSW. MONRE |

13TH HIGH-LEVEL ROUND TABLE MEETING

Vientiane | 17 November 2021

# ຂໍຂອບໃຈ!

13TH HIGH-LEVEL
ROUND TABLE MEETING

Vientiane | 17 November 2021

# THANK YOU!